**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ກົມແຜນການ

1468 ---
ເລກທີ /ຜກ
ນະຄອນຫຼວງວຽງຈັນ, ວັນທີ 16 ພຶດສະພາ 2024

# ໜັງສືສະເໜີ

**ຮຽນ:** ທ່ານ ຜູ້ອຳນວຍການສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ, ກະຊວງສຶກສາທິການ ແລະ ກິລາ.

**ເລື່ອງ:** ຂໍປະກາດການຈັດຈ້າງໂຮງພິມສະໜອງການຈັດພິມປຶ້ມຄູ່ມືການສອນຄວບອາຍຸ 3-5 ປີ, ປຶ້ມຄູ່ມືແນະນໍາວິທີການຜະລິດ ແລະ ນໍາໃຊ້ສື່ການຮຽນການສອນຄວບອາຍຸ 3-5 ປີ ແລະ ຮ່າງຕິດຕາມ ແລະ ບັນທຶກພັດທະນາຜົນການຮຽນຂອງນັກຮຽນສະໜອງໃຫ້ກົມສ້າງຄູ ພາຍໃຕ້ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ (GPE III-LEAP), ກະຊວງສຶກສາທິການ ແລະ ກິລາ (Credit No. 6854 - LA);

- ອີງຕາມ ໜັງສືສະເໜີ ຈາກກົມສ້າງຄູສະບັບເລກທີ 0439/ຜກ ລົງວັນທີ 01 ເມສາ 2024 ຫາຫ້ອງການປະສານງານສາກົນເພື່ອການສຶກສາ (ECU), ກົມແຜນການ ກ່ຽວກັບການຂໍອະນຸມັດຈັດພິມປຶ້ມຄູ່ມືການສອນຄວບອາຍຸ 3-5 ປີ ຈໍານວນ 400 ຫົວ, ປຶ້ມຄູ່ມືແນະນໍາວິທີການຜະລິດ ແລະ ນໍາໃຊ້ສື່ການຮຽນການສອນຄວບອາຍຸ 3-5 ປີ ຈໍານວນ 400 ຫົວ, ຮ່າງຕິດຕາມ ແລະ ບັນທຶກພັດທະນາຜົນການຮຽນຂອງນັກຮຽນ ຈໍານວນ 400 ຫົວ ສະໜອງໃຫ້ກົມສ້າງຄູ ພາຍໃຕ້ໂຄງການ GPE III-LEAP;

ຫ້ອງການປະສານງານສາກົນເພື່ອການສຶກສາ, ກົມແຜນການ ໂຄງການ GPE III - LEAP ມີຈຸດປະສົງຂໍປະກາດການຈັດຈ້າງໂຮງພິມສະໜອງການຈັດພິມປຶ້ມຄູ່ມືການສອນຄວບອາຍຸ 3-5 ປີ, ປຶ້ມຄູ່ມືແນະນໍາວິທີການຜະລິດ ແລະ ນໍາໃຊ້ສື່ການຮຽນການສອນຄວບອາຍຸ 3-5 ປີ ແລະ ຮ່າງຕິດຕາມ ແລະ ບັນທຶກພັດທະນາຜົນການຮຽນຂອງນັກຮຽນ ສະໜອງໃຫ້ກົມສ້າງຄູ, ພາຍໃຕ້ໂຄງການ (GPE III-LEAP), ກະຊວງສຶກສາທິການ ແລະ ກິລາ (Credit No. 6854 - LA). ສະນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ຊ່ວຍລົງປະກາດທາງເວບໄຊ ຂອງກະຊວງສຶກສາທິການ ແລະ ກິລາ ໃນວັນທີ 15-29 ພຶດສະພາ 2024, ດັ່ງລາຍລະອຽດໄດ້ຄັດຕິດເອກະສານປະກາດມາພ້ອມນີ້ (1 ສະບັບ) ຜູ້ທີ່ສົນໃຈ ສາມາດຕິດຕໍ່ພົວພັນ ໄດ້ທີ່:

ຫ້ອງການປະສານງານສາກົນເພື່ອການສຶກສາ (ECU), ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ
ໂທ: +856 21 243672 ຫລື 020 5582 6153 ຫລື 020 5459 5936
e-mail: ecudp.laopdr@moes.edu.la cc amphamay@gmail.com

ດັ່ງນັ້ນ, ຈຶ່ງຂໍຮຽນສະເໜີມາຍັງທ່ານເພື່ອພິຈາລະນາ ແລະ ດໍາເນີນການຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ກະຊວງສຶກສາທິການ ແລະ ກິລາ
ກົມແຜນການ

ປອ. ບຸນປັນ ໄຊມຸນຕຣີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມແຜນການ 1470---1

ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ ເລກທີ: /ຜກ

ນະຄອນຫລວງວຽງຈັນ, ວັນທີ: 15 ພຶດສະພາ2024

## ໜັງສືເຊີນເຂົ້າຮ່ວມການສົມທຽບລາຄາ

ເຖິງ: ____________________

1. ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ໄດ້ຮັບທຶນຊ່ວຍເຫຼືອລ້າ ຈາກໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສອງ (GPE III) ພາຍໃຕ້ການຄຸ້ມຄອງຂອງທະນາຄານໂລກ ເພື່ອດຳເນີນການສົມທຽບລາຄາການຈັດພິມປຶ້ມຄູ່ມືການສອນຄວບອາຍຸ 3-5 ປີ ຈຳນວນ 400 ຫົວ, ປຶ້ມຄູ່ມືແນະນຳວິທີການຜະລິດ ແລະ ນຳໃຊ້ສື່ການຮຽນການສອນຄວບອາຍຸ 3-5 ປີ ຈຳນວນ 400 ຫົວ, ຮ່າງຕິດຕາມ ແລະ ບັນທຶກພັດທະນາຜົນການຮຽນຂອງນັກຮຽນ ຈຳນວນ 400 ຫົວ ສະໜອງໃຫ້ກົມສ້າງຄູ, ພາຍໃຕ້ໂຄງການ GPE III-LEAP.
2. ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ GPE III ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງສົມທຽບລາຄາການຈັດພິມປຶ້ມຄູ່ມືການສອນຄວບອາຍຸ 3-5 ປີ, ປຶ້ມຄູ່ມືແນະນຳວິທີການຜະລິດ ແລະ ນຳໃຊ້ສື່ການຮຽນການສອນຄວບອາຍຸ 3-5 ປີ, ຮ່າງຕິດຕາມ ແລະ ບັນທຶກພັດທະນາຜົນການຮຽນຂອງນັກຮຽນ ສະໜອງໃຫ້ກົມສ້າງຄູໄລຍະເວລາໃນການສົ່ງມອບແມ່ນ **30** ວັນ (ພາຍຫຼັງເຊັນສັນຍາ).
3. ການສົມທຽບລາຄານີ້ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019. ບໍລິສັດ ຫຼື ຫ້າງຮ້ານສົນໃຈເຊີນຕິດຕໍ່ເອົາຊອງສົມທຽບລາຄາ ນັບແຕ່ວັນທີ 15 ພຶດສະພາ 2024 – 29 ພຶດສະພາ **2024** ຕາມເວລາໂມງລັດຖະການ.
4. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ 14:**00** ໂມງ ຂອງວັນທີ 29 ພຶດສະພາ **2024** ແລະ ຊອງສະເໜີລາຄາທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງມື້ດຽວກັນ ໂດຍຊ່ອງໜ້າຄະນະກຳມະການ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຫ້ອງການປະສານງານສາກົນເພື່ອການສຶກສາ (ECU), ຊັ້ນ 3 ຕຶກ ICT, ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ. ສະຖານ ທີ່ ຖະໜົນລ້ານຊ້າງ, ຕຶກ ICT ຊັ້ນ 3, ຕູ້ ປນ. 067 ໂທ/ແຟັກ: (+865 21) 243672; ອີເມວ: ecudp.laopdr@moes.edu.la

**ຫົວໜ້າກົມ**

ກະຊວງສຶກສາທິການ ແລະ ກິລາ

ກົມແຜນການ

ປອ. ບຸນປັນ ໄຊມຸນຕຣີ